ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ຫ້ອງການລັດຖະບານ

ກອງທຶນປົກປັກຮັກສາສິ່ງແວດລ້ອມ

ແບບຟອມບົດສະເໜີໂຄງການ

ຂໍ້ແນະນຳ:

- *ຄຳຮ້ອງສາມາດຍື່ນເປັນພາສາລາວ.*
- *ບັນທັດຖານທີ່ຈະໄດ້ທຶນມີດັ່ງຕໍ່ໄປນີ້: (a) ສະໜັບສະໜູນນະໂຍບາຍ, ຍຸດທະສາດແລະແຜນການຂອງລັດຖະບານ/ແຂວງ; (b) ຖືກກັບໜຶ່ງຂອງເຂດຂອງກອງທຶນຍ່ອຍຂອງ ກປສ (ນະໂຍບາຍແລະສ້າງຄວາມສາມາດ, ຊີວະນາໆພັນ, ຄວບຄຸມມົນລະພິດ, ຄຸ້ມຄອງຊັບພະຍາກອນນ້ຳ, ຄຸ້ມຄອງທີ່ດິນ); (c) ບໍ່ມີກິດຈະກຳທີ່ເກືອດຫ້າມ.*
- *ໂຄງການຍ່ອຍ, ຖ້າແມ່ນຫຼາຍປີ, ຈະໄດ້ຕ້ອງມີຜົນງານທີ່ດີເພື່ອຈະຕໍ່ໃນປີຕໍ່ໄປ. ການປະເມີນຜົນງານປະຈຳປີພົວພັນ ກັບທຶນ, ການຄຸ້ມຄອງແລະຜົນໄດ້ຮັບໃນປີນັ້ນ ຊຶ່ງໄດ້ກຳນົດໄວ້.*

ເອກະສັກບົດສະເໜີໂຄງການຍ່ອຍ ຂອງ ກປສ:

1. ຊື່ແລະທີ່ຢູ່ຂອງຜູ້ສະເໜີຈັດຕັ້ງປະຕິບັດໂຄງການຍ່ອຍ:	ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງບໍລິຄຳໄຊ ບ້ານຫົງໄຊ ຖະໜົນ 4 B, ບ້ານໂພນໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ ເວັບໄຊ : www.BLX.monre.gov.la
2. ຊື່, ໜ້າທີ່, ບ່ອນພົວພັນລະອຽດ ຈຸດປະສານງານ ຜູ້ສະເໜີຈັດຕັ້ງປະຕິບັດໂຄງການຍ່ອຍ:	• ທ່ານ ມະນີແສງເພັດ ພະຄູນທອງ ຮອງຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ແຂວງບໍລິຄຳໄຊ ໂທລ : 054 790851 ແຟັກ : 054 790851 ມືຖື : 020 98198558 ອີເມວ : pmanysengpet@gmail.com

3. ລະດັບພື້ນທີ່ຂອງໂຄງການຍ່ອຍ *(ອາດຫຼາຍກ່ວາ 1 ທາງເລືອກ)*	☐ ລະດັບສາກົນ ☐ ລະດັບສູນກາງ/ຊາດ ☑ ລະດັບແຂວງ/ເມືອງ ກະລຸນາບອກຊື່ແຂວງເປົ້າໝາຍ: ແຂວງບໍລິຄຳໄຊ ☑ ປ່າສະຫງວນ: ປ່າປ້ອງແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ວງ
4. ຊື່ໂຄງການຍ່ອຍ	ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ເຂດອ່າງໂຕ່ງນ້ຳຍວງ ແຂວງບໍລິຄຳໄຊ
5. ຈຳນວນທຶນທີ່ຂໍ : *(ເງິນໂດຍເງິນປະມານເປັນເງິນກີບ)*	2,796,000,000.00 ກີບ
6. ກອງທຶນຍ່ອຍຂອງ ກປສ ທີ່ໃຫ້ທຶນ *(ໃຫ້ໝາຍເອົາ 1 ທາງເລືອກ)*	☐ ນະໂຍບາຍ ☑ ຊີວະນາໆພັນ ☐ ການຄວບຄຸມມົນລະພິດ ☐ ການຄຸ້ມຄອງທີ່ດິນ ☐ ການຄຸ້ມຄອງຊັບພະຍາກອນນ້ຳ
7. ໜ້າວຽກການຈັດຕັ້ງປະຕິບັດ ຫຼື ຂະແໜງການທີ່ພົວພັນກັບໂຄງການຍ່ອຍ, ສິ່ງທ້າທາຍ ແລະ ບຸລິມະສິດ *(ອະທິບາຍກ່ຽວກັບໜ້າທີ່ຂອງຜູ້ສະເໜີ, ຄວາມອາດສາມາດ ແລະ ໜ້າວຽກທີ່ເຮັດໃນ ປະຈຸບັນ ທີ່ພົວພັນກັບປ່າສະຫງວນ, ສັດປ່າ, ສິ່ງແວດລ້ອມ, ການປ້ອງກັນທາງສັງຄົມ, ສິ່ງທ້າທາຍ, ບຸລິມະສິດທີ່ຕ້ອງການ ແລະສະເໜີແນວທາງໃນການແກ້ໄຂບຸລິມະສິດ ແລະ ຂໍ້ຄົງຄ້າງດັ່ງກ່າວ)*	***ພາລະບົດບາດ ແລະ ໜ້າທີ່ຂອງຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ ແຂວງ ບໍລິຄຳໄຊ*** ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ (ຂຄຊປ) ເປັນ ຂະແໜງ ທີ່ສ້າງຕັ້ງຂຶ້ນໃໝ່ໃນ ພຊສ ແຂວງ, ມີພາລະບົດບາດ ເປັນເສນາທິການ ໃຫ້ແກ່ ການນຳຂອງ ພຊສ ໃນການຄຸ້ມຄອງ, ປົກປັກ ຮັກສາ, ຟື້ນຟູປ່າສະຫງວນ ແລະປ່າປ້ອງກັນພາຍໃນແຂວງ. ພະນັກງານຄຸ້ມຄອງຊັບພະຍາກອນປ່າໄມ້ທັງໝົດ 49 ຄົນ, ຍິງ 10 ຄົນ ລວມທັງອາສາສະໝັກ ທີ່ບັນຈຸເຂົ້າໃນ 3 ໜ່ວຍງານຄື: ໜ່ວຍງານຄຸ້ມຄອງປ່າສະຫງວນ, ໜ່ວຍງານຄຸ້ມຄອງປ່າປ້ອງກັນ ແລະ ໜ່ວຍງານສຳຫຼວດ, ກວດກາປ່າສະຫງວນແລະປ່າປ້ອງກັນ. ພະນັກງານສ່ວນໜຶ່ງຂອງພະນັກງານ ຂຄຊປ ແມ່ນລົງປະຈຳຢູ່ຫ້ອງການພາກສະໜາມ ເພື່ອສະກັດກັ້ນ ການລັກລອບ ແລະ ບຸກລຸກເຂົ້າໃນປ່າສະຫງວນ. ນອກຈາກນີ້ ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ (ຂຄຊປ) ຍັງໄດ້ເຄື່ອນໄຫວຄຸ້ມຄອງສະເພາະເຂດ ປ່າປ້ອງກັນ ນ້ຳມ່ວນ-ນ້ຳຍ້ວງ ເພື່ອຄວາມອຸດົມສົມບູນທາງດ້ານຊີວະນາໆພັນ ແລະ ເພື່ອຮັກສາຕົ້ນນ້ຳໃນການ ສະໜອງນ້ຳໃຫ້ແກ່ເຂື່ອນໄຟຟ້າໃນການຜະລິດໄຟຟ້າ ຢ່າງພຽງພໍ ແລະ ຍືນຍົງ.

ສິ່ງທ້າທາຍ ແລະ ຄວາມຕ້ອງການຂອງຂະແໜງການ

ຕາມຄວາມເປັນຈິງໃນປະຈຸບັນ ງົບປະມານປະຈຳປີຈາກລັດຖະບານ ເພື່ອຕອບສະໜອງໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງ 2 ປະເພດປ່າ ແມ່ນ ມີຈຳກັດ ເຊິ່ງສ່ວນຫຼາຍອາໄສງົບປະມານຈາກໂຄງການຊ່ວຍເຫຼືອ.

ສະນັ້ນ, ໂຄງການຄຸ້ມຄອງປ່າປ້ອງກັນ ນ້ຳມ່ວນ-ນ້ຳຍ້ອງ ໄລຍະທີ1 ຜ່ານມາ ໄດ້ຮັບການສະນັບສະໜຸນທຶນ ຈາກ ກປສ ຊຶ່ງແມ່ນເງິນພັນທະ ຂອງ ເຂື່ອນໄຟຟ້າເທີນຫິນບຸນພາກຂະຫຍາຍ ໃຫ້ແກ່ລັດຖະບານ ເຊິ່ງໂຄງການ ໄດ້ປະກອບພາຫະນະ ແລະອຸປະກອນ ໃນການເຄື່ອນໄຫວວຽກງານ ຈຳນວນ ນຶ່ງເຊັ່ນ: ລົດກະບະ 1 ຄັນ (ສຳລັບແຂວງ), ແລບທອບຄອມ 3 ເຄື່ອງ (ສຳລັບແຂວງ), USB 3 ອັນ(ສຳລັບແຂວງ), ລົດຈັກ 3 ຄັນ (ເມືອງໆລະ 1 ຄັນ), ຄອມພິວເຕີ້ຕັ້ງໂຕະ 4 ໜ່ວຍ(ແຂວງ 1 ໜ່ວຍ, ເມືອງ 3 ໜ່ວຍ ເມືອງໆລະ 1 ໜ່ວຍ), ໂທລະສັບ/ແຟັກ 4 ໜ່ວຍ (ແຂວງ 1 ໜ່ວຍ, ເມືອງ 3 ໜ່ວຍ ເມືອງໆລະ 1 ໜ່ວຍ), ຕູ້ໃສ່ເອກະສານ 4 ໜ່ວຍ (ແຂວງ 1 ໜ່ວຍ, ເມືອງ 3 ໜ່ວຍ ເມືອງໆລະ 1 ໜ່ວຍ), ໂຕະ, ຕັ່ງ 4 ຊຸດ (ແຂວງ 1 ຊຸດ, ເມືອງ 3 ຊຸດ ເມືອງໆລະ 1 ຊຸດ).

ຜ່ານການເຄື່ອນໄຫວວຽກງານຕົວຈິງຜ່ານມາ ເຫັນວ່າມັນມີຄວາມ ຈຳເປັນ ສຳລັບ ວຽກງານທີ່ຢູ່ຂັ້ນທ້ອງຖິ່ນແມ່ນຍັງຕ້ອງການປະກອບ ໃຫ້ມີພາຫະນະ ແລະ ອຸປະກອນຕື່ມອີກຈຳນວນນຶ່ງ ໂດຍສະເພາະແມ່ນວຽກງານ ໃນໂຄງການໄລຍະທີ່ 2 ນີ້ເພື່ອເປັນການສ້າງຄວາມເຂັ້ມແຂງ ແລະ ສ້າງຄວາມສະດວກໃຫ້ແກ່ ການເຄື່ອນໄຫວວຽກງານໂຄງການໃນທ້ອງຖິ່ນ ເປັນຕົ້ນແມ່ນ: ລົດກະບະ 1 ຄັນ (ສຳລັບຫ້ອງການພາກສະໜາມຢູ່ເມືອງ), ລົດຈັກ 3 ຄັນ (ສຳລັບປະຈຳ ຈຸດກວດກາລາດຕະເວນ ຈຸດລະ 1 ຄັນ), ຄອມພິວເຕີ 2 ເຄື່ອງ (ສຳລັບຫ້ອງການຢູ່ແຂວງ ແລະ ເມືອງ), ເຄື່ອງພິມເອກະສານ 1 ເຄື່ອງ(ຢູ່ເມືອງ), LCD 1 ເຄື່ອງ (ຢູ່ເມືອງ).

ນອກຈາກຄວາມຈຳເປັນທາງດ້ານພາຫະນະ ແລະ ອຸປະກອນແລ້ວ ການ ຄຸ້ມຄອງແລະປົກປັກຮັກສາປ່າປ້ອງກັນແຫ່ງນີ້ ມັນຍັງຂາດຫຼາຍປັດໄຈອີກຢູ່ ເປັນຕົ້ນແມ່ນການສ້າງຄວາມເຂັ້ມແຂງ ໃຫ້ພະນັກງານເມືອງ ແລະ ສ້າງເຄືອຂ່າຍ ອະນຸລັກບ້ານ ເພື່ອປັບປຸງການຮ່ວມມືໃນ ລະບົບການຄຸ້ມຄອງ ຊັບພະຍາກອນ ປ່າໄມ້ ລະຫວ່າງລັດກັບຊຸມຊົນໃຫ້ດີຂຶ້ນ ມັນມີຄວາມຈຳເປັນ ຕ້ອງມີທຶນສຳລັບ ການເຄື່ອນໄຫວ, ທຶນສະໜັບສະໜຸນ ກິດຈະກຳປັບປຸງຊີວິດ ການເປັນຢູ່ຂອງ ປະຊາຊົນ.

	ຮູບແບບການຈັດຕັ້ງປະຕິບັດ: ຮູບແບບການຈັດຕັ້ງປະຕິບັດ ແມ່ນ ເນັ້ນໃສ່ຍົກສູງຄວາມເປັນເຈົ້າການ ໃນການເຂົ້າຮ່ວມຂອງເມືອງແລະບ້ານ ໂດຍສະເພາະການປຶກສາຫາລືນຳກັນລະຫວ່າງ ພຊສແຂວງ ແລະ ບັນດາຂະແໜງ ການອື່ນໆຂອງແຂວງທີ່ກ່ຽວຂ້ອງຂັ້ນແຂວງຢ່າງເປັນລະບົບ, ທຸກໆ 6 ເດືອນ. ພຊສ ແຂວງເປັນຜູ້ຊີ້ນຳໆພາ ຕິດຕາມກວດກາໃນການຈັດຕັ້ງປະຕິບັດ ກິດຈະກຳຂອງໂຄງການຍ່ອຍຢູ່ພາກສະໜາມ ຕາມທີ່ໄດ້ຕົກລົງກັບ ກປສ ແລະ ມອບໝາຍວຽກງານຕ່າງໆໃຫ້ເມືອງ ເປັນຜູ້ຈັດຕັ້ງປະຕິບັດ (ຕາມທິດຂອງ 3 ສ້າງ), ສ້າງຄວາມສາມາດໃຫ້ເມືອງ ແລະ ຕິດຕາມແລະຊຸກຍູ້ການຈັດຕັ້ງປະຕິບັດ ພາກສະໜາມ.
8. **ຈຸດປະສົງການຂອງໂຄງການຍ່ອຍ** *(ໃຫ້ຂຽນພຽງປະໂຫຍກດຽວ)*	ເພື່ອສ້າງຄວາມອາດສາມາດໃນການຮ່ວມມືແບບມີສ່ວນຮ່ວມ ລະຫວ່າງ ລັດ ກັບ ຊຸມຊົນ ໃນການຄຸ້ມຄອງປົກປັກຮັກສາພັດທະນາປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງ ພ້ອມທັງປັບປຸງຊີວິດການເປັນຢູ່ປະຊາຊົນໃຫ້ນັບມື້ນັບດີຂຶ້ນ.
9. **ນະໂຍບາຍ/ແຜນການ ແລະຍຸດທະສາດ ຂອງ ລັດຖະບານ ທີ່ສະໜັບສະໜຸນ ໂດຍ ໂຄງການຍ່ອຍ** *(ລວມທັງແຜນຍຸດທະສາດຂອງແຂວງ ຖ້າເປັນໄປໄດ້)*	ໂຄງການຍ່ອຍນີ້ຈະສະໜັບສະໜຸນ ບັນດາຍຸດທະສາດແຫ່ງຊາດ ແລະ ແຜນການ ຕ່າງໆ ທີ່ສຳຄັນໄດ້ແກ່: 1. ກົດໝາຍວ່າດ້ວຍ ປ່າໄມ້ 2. ດຳລັດວ່າດ້ວຍ ປ່າປ້ອງກັນ 3. ຍຸດທະສາດດ້ານປ່າໄມ້ ຮອດປີ 2020 4. ແຜນຂອງ ພຊສ ຂອງແຂວງບໍລິຄຳໄຊ 5. ແຜນສິ່ງແວດລ້ອມແລະ ສັງຄົມຂອງໂຄງການໄຟຟ້ານ້ຳຕົກ ເທີນຫິນບູນ ພາກຂະຫຍາຍ.
10. **ຜົນຮັບລະດັບພາກພື້ນ ແລະລະດັບໂລກ ທີ່ໂຄງການຍ່ອຍສະນັບສະໜຸນ ຫລື ປະກອບສ່ວນ** *(ເຊັ່ນ: ການຮ່ວມມືລະຫວ່າງຊາດ, ການ ແລກປ່ຽນຄວາມຮູ້, ປ້ອງກັນການຄ້າ-ຂາຍ ສັດປ່າ ທີ່ຜິດກົດໝາຍໃນຂອບເຂດພາກພື້ນ)*	ໂຄງການຍ່ອຍນີ້ຊ່ວຍສ້າງໃຫ້ມີລະບົບ, ກົນໄກ ແລະເພີ່ມຄວາມຮູ້ຄວາມສາມາດ ຂອງພະນັກງານ ຈົນຮອດປະຊາຊົນ ໂດຍຜ່ານການຝຶກອົບຮົມ, ການທັດສະນະ ສຶກສາແລກປ່ຽນບົດຮຽນ, ການແລກປ່ຽນຂໍ້ມູນຂ່າວສານການສ້າງສາຍພົວພັນ ການຮ່ວມມືທັງສອງຝ່າຍຕາມແນວຊາຍແດນ ສອງເຂດ ໃນການຄຸ້ມຄອງ ປົກ ປັກຮັກສາປ່າໄມ້, ການສຳຫລວດຊີວະນາໆພັນ ແລະບັນດານະໂຍບາຍໃນ ການ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນເຂດອ້ອມຂ້າງປ່າປ້ອງກັນແຫ່ງ ຊາດ ນ້ຳມ່ວນ-ນ້ຳຍ້ອງ ຂອງ ສປປ ລາວ ແລະ ອຸທິຍານແຫ່ງຊາດ ພູມັດ ສສ ຫວຽດ ນາມ ຊຶ່ງໄດ້ລິເລີ່ມມາແຕ່ປີ 2010 - 2015

11. ຕົວຊີ້ວັດຜົນຮັບຂອງໂຄງການຍ່ອຍ *(ຂຽນລາຍການຕົວຊີ້ວັດຜົນຮັບ ແລະ ຕົວຊີ້ວັດຜົນຮັບໄລຍະກາງ ທີ່ພົວພັນຈາກຜົນຮັບຂອງໂຄງການ ພ້ອມທັງອະທິບາຍຕົວຊີ້ວັດຜົນຮັບສະເພາະຂອງໂຄງການຍ່ອຍ. ຜົນຮັບ ແລະຜົນກະທົບ ເປັນຜົນປະໂຫຍດໄລຍະຍາວ ໃດໜຶ່ງສະເພາະກ່ຽວກັບສິ່ງຂອງ ຫລືການ ບໍລິການຕໍ່ກຸ່ມຜູ້ໄດ້ຮັບຜົນປະໂຫຍດເປົ້າໝາຍ)*	ຕົວຊີ້ວັດຂອງໂຄງການຍ່ອຍ ມີດັ່ງນີ້: *(ຕົວຊີ້ວັດຂອງໂຄງການ ໂດຍອີງໃສ່ລະດັບຄາດໝາຍຮ່ວງຕົວຊີ້ວັດເບື້ອງຕົ້ນຂອງ ກປສ)* 1. *ຕົວຊີ້ວັດ 1:* ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະສິດທິຜົນຂອງການຄຸ້ມຄອງ (ປະຈຳປີ) 2. *ຕົວຊີ້ວັດ 5:* ການຈັດຕັ້ງບ້ານ ທີ່ຢູ່ໃນແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜຸນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ) 3. *ຕົວຊີ້ວັດ* 1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າສັດປ່າຫຼືປ່າໄມ້
12. ຜົນໄດ້ຮັບຕົ້ນຕໍ ຂອງໂຄງການຍ່ອຍ *(ສິ່ງຂອງ ຫລືການບໍລິການທີ່ໄດ້ຮັບຈາກ ການກະທົບໃສ່ຂອງໂຄງການ (ໂຕຂັບ ເຄື່ອນການສະໜອງ) ເຊັ່ນ: ຈຳນວນພະນັກ ງານທີ່ໄດ້ຝຶກ, ເອກະສານຄູ່ມືເປັນຈຳນວນ ໜ້ຶ່ງທີ່ໄດ້ສ້າງຂຶ້ນ)*	1. ບ້ານໄດ້ຮັບການຝຶກອົບຮົມການຄຸ້ມຄອງກອງທຶນບ້ານ, ເຕັກນິກການປູກຝັງລ້ຽງສັດຕ່າງໆທີ່ຈຳເປັນ ຈຳນວນ 90 ຄົນ ໃນນີ້ມີແມ່ຍິງຈຳນວນ 27 ຄົນ 2. ປະຊາຊົນ ໄດ້ເຂົ້າຮ່ວມທັດສະນະສຶກສາ ກ່ຽວກັບການມີສ່ວນຮ່ວມ ໃນ ການຄຸ້ມຄອງປ່າປ້ອງກັນ ແລະ ວຽກງານຮູບແບບການຜະລິດກະສິກຳ ທີ່ຍືນຍົງ 1 ຄັ້ງ, 45 ທ່ານຍິງ 9 ຄົນ) 3. ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະມວນຊົນ ບ້ານເປົ້າ ໝາຍ ຂອງໂຄງການ ໃນເຂດປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງ ໄດ້ຮັບຟັງການເຜີຍແຜ່ ລະບຽບ ກົດໝາຍ ໃນດ້ານການອະນຸລັກຊັບພະຍາ ກອນປ່າໄມ້ ແລະ ສິ່ງແວດລ້ອມ (1 ຄັ້ງ/ບ້ານ, ກົມກອງ ແລະ ໂຮງຮຽນ) 4. ສຳເລັດຂະບວນການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ດິນປ່າໄມ້ແບບມີສ່ວນຮ່ວມ, ປັກປ້າຍ ແລະ ຫລັກໝາຍ (ດິນແຕ່ລະປະເພດ) ໃນຂອບເຂດ 9 ບ້ານ 5. ໄດ້ກິດຈະກຳປັບປຸງຊີວິດການເປັນຢູ່ຂອງຊຸມຊົນ 9 ບ້ານ ຈາກຂະບວນການວາງແຜນພັດທະນາຊີວິດການເປັນຢູ່ແບບມີສ່ວນຮ່ວມ 6. ຈະມີຜົນໄດ້ຮັບຈາກວຽກງານກວດກາລາດຕະເວນຂອງຈຸດກວດກາ ໂດຍມີບົດລາຍງານຜົນງານທຸກໆ 3 ເດືອນ. 7. ມີເອກະສານພາລະບົດບາດ ແລະ ລະບຽບການຂອງບ້ານ ໃນການຄຸ້ມຄອງ ທີ່ດິນ ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ແຫລ່ງນ້ຳ ບ້ານລະ 2 ຊຸດ. 8. ໄດ້ສ້າງວັງສະຫງວນຂອງບ້ານ ຢ່າງໜ້ອຍ 1 ແຫ່ງ 9.ປະຊາຊົນໄດ້ຮັບທຶນສະໜັບສະໜຸນເຂົ້າໃນການພັດທະນາຊີວິດການເປັນຢູ່

	ແບບຄົງທີ່ ຈຳນວນ 9 ບ້ານ(ກອງທຶນອະນຸລັກບ້ານ). 10. ສ້າງບ້ານອະນຸລັກໃຫ້ໄດ້ຫຼາຍກວ່າ 6 ບ້ານຂຶ້ນໄປໃນ 9 ບ້ານເປົ້າໝາຍໂຄງການ. 11. ຈຳນວນ 33 ບ້ານເປົ້າໝາຍໂຄງການທີ່ຜ່ານມາ (ບ້ານຂອງໂຄງການນ້ຳຍ້ອງຕອນເໜືອເກົ່າ 9 ບ້ານ, ບ້ານຂອງໂຄງການນ້ຳຍ້ອງຕອນໃຕ້ 12 ບ້ານ ແລະ ບ້ານຂອງໂຄງການເຄືອຂ່າຍອະນຸລັກຊຸມຊົນເກົ່າ 2 ບ້ານ) ໄດ້ຮັບການຕິດຕາມຊຸກຍູ້ເປັນປົກກະຕິ

13. ອົງປະກອບແລະກິດຈະກຳ

(ຂຽນລາຍການອົງປະກອບ ແລະ ກິດຈະກຳທີ່ເຮັດໃຫ້ເກີດຜົນໄດ້ຮັບຂ້າງເທິງ ບໍ່ຄວນໃຫ້ຫຼາຍກ່ວາ 5 ອົງປະກອບ (ເບິ່ງລາຍລະອຽດຢູ່ໃນແຜນວຽກແລະງົບປະມານປະຈຳປີຄັດຕິດ).

ອົງປະກອບ	ກິດຈະກຳຕົ້ນຕໍ
ອົງປະກອບ 1: ສ້າງຄວາມສາມາດໃນການຄຸ້ມຄອງປ່າປ້ອງກັນ	*ກິດຈະກຳ 1.1:* ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ(ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການຄຸ້ມຄອງບໍລິຫານກອງທຶນແກ່ບ້ານ ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 4ວັນ ຊຶ່ງຄາດໝາຍສ້າງໃຫ້ໄດ້ບຸກຄະລາກອນຄຸ້ມຄອງກອງທຶນບ້ານ ບ້ານລະ 4ຄົນ ໃນນັ້ນມີແມ່ຍິງ 1ຄົນ ແລະ ພ້ອມກັບຈຳນວນສະມາຊິກກຸ່ມກອງທຶນແຕ່ລະບ້ານ ລວມຈຳນວນຄົນຝຶກອົບຮົມໃນ 9 ບ້ານມີບຸກຄະລາກອນຄຸ້ມຄອງກອງທຶນ 36ຄົນ, ຍິງ 9ຄົນ ແລະ ຈຳນວນສະມາຊິກກຸ່ມກອງທຶນບ້ານແຕ່ລະບ້ານ. *ກິດຈະກຳ 1.2:* ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການປູກຝັງ (ເຕັກນິກການປູກເຂົ້າ, ປູກສາລີ, ປູກມັນຕົ້ນ, ປູກພືດອື່ນໆ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5ວັນ ຊຶ່ງຄາດໝາຍສ້າງໃຫ້ໄດ້ບຸກຄະລາກອນທີ່ສາມາດເປັນຄູຝຶກອຽກປູກຝັງ ບ້ານລະ 3ຄົນ ໃນນັ້ນມີແມ່ຍິງ 1ຄົນແລະພ້ອມກັບຈຳນວນສະມາຊິກ ກຸ່ມປູກຝັງແຕ່ລະບ້ານ ລວມຈຳນວນຄົນຝຶກອົບຮົມໃນ 9ບ້ານມີ ບຸກຄະລາກອນຮັບຜິດຊອບອຽງປູກຝັງບ້ານທັງໝົດ 27ຄົນ, ຍິງ 9ຄົນ ແລະ ຈຳນວນສະມາຊິກກຸ່ມປູກຝັງບ້ານແຕ່ລະບ້ານ.

ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ)

ຝຶກອົບຮົມດ້ານວິຊາການໃນການລ້ຽງສັດ (ເຕັກນິກການລ້ຽງງົວ, ລ້ຽງແບ້, ລ້ຽງໝູ, ລ້ຽງໄກ່, ລ້ຽງເປັດ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ວັນ ຊຶ່ງຄາດໝາຍສ້າງໃຫ້ໄດ້ບຸກຄະລາກອນທີ່ສາມາດເປັນຄູຝຶກອຽກລ້ຽງສັດບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 1 ຄົນ ແລະ ພ້ອມກັບຈຳນວນສະມາຊິກກຸ່ມລ້ຽງສັດແຕ່ລະບ້ານ ລວມຈຳນວນຄົນຝຶກອົບຮົມໃນ 9 ບ້ານມີບຸກຄະລາກອນຮັບຜິດຊອບອຽກລ້ຽງສັດບ້ານທັງໝົດ 27 ຄົນ ຍິງ 9 ຄົນ ແລະ ຈຳນວນສະມາຊິກກຸ່ມລ້ຽງສັດບ້ານແຕ່ລະບ້ານ.

ກິດຈະກຳ 1.4: ໄປປະຊຸມນຳ ປກສ

ການເຂົ້າຮ່ວມກອງປະຊຸມຕ່າງໆ, ການເຂົ້າຮ່ວມປຶກສາຫາລື ວຽກງານທີ່ຈຳເປັນ, ການຂຶ້ນໄປປຶກສາຫາລືບາງວຽກງານແລະ ອື່ນໆ ຢູ່ທີ່ຫ້ອງການ ກປສ ທີ່ວຽງຈັນ ແລະ ບ່ອນອື່ນໆ.

ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ

ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ລົງໄປຫາແຕ່ລະບ້ານເປົ້າໝາຍ ເພື່ອຮ່ວມປຶກສາຫາລືໃນການກະກຽມການດຳເນີນງານຂອງ ໂຄງການ ພ້ອມນີ້ກໍສ້າງໃຫ້ບ້ານຕ້ອງມີຄວາມເຂົ້າໃຈຕໍ່ທິດທາງແຜນການຈຸດປະສົງເປົ້າໝາຍ ຂອງ ໂຄງການ ທັງນີ້ກໍເພື່ອຄວາມສະດວກໃນການປະສານງານ ແລະ ການດຳເນີນໂຄງການຢູ່ແຕ່ລະບ້ານ ເຊິ່ງການລົງໄປຫາບ້ານຈະປະກອບມີ ຜູ້ຕາງໜ້າຈາກຄະນະກຳມະການຊີ້ນຳຂັ້ນແຂວງ 2 ທ່ານ, ຜູ້ປະສານງານຂັ້ນເມືອງ 5ຄົນ, ຍິງ 1ຄົນ, ອຳນາດການປົກຄອງບ້ານໆລະ 10ຄົນ ແລະ ພະນັກງານໂຄງການຈາກແຂວງ 3 ທ່ານ.

ກິດຈະກຳ 1.6: ທັດສະນະສຶກສາພາຍໃນ.

ເພື່ອເປັນການສ້າງຄວາມເຂັ້ມແຂງອີກຮູບແບບນຶ່ງໃຫ້ແກ່ທ້ອງຖິ່ນ

	ໂດຍໃຫ້ເຂົາເຈົ້າໄດ້ໄປຖອດຖອນບົດຮຽນຈາກບ່ອນທີ່ມີປະສົບການທີ່ມີຜົນສຳເລັດ ເພື່ອມາໝູນໃຊ້ໃນເຂດຂອງຕົນ ເຮັດໃຫ້ການຈັດຕັ້ງປະຕິບັດທີ່ເຂົາເຈົ້າເຮັດຜ່ານມາໄດ້ມີການປັບປຸງໃຫ້ມີປະສິດທິຜົນດີຂຶ້ນ ເຊິ່ງຄາດວ່າຈະມີຜູ້ຮ່ວມກິດຈະກຳຈຳນວນບ້ານລະ 5ຄົນ, ຍິງ 1ຄົນ ລວມເປັນ 45ຄົນ ຍິງ 9ຄົນ. *ກິດຈະກຳ 1.7:* ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ ຮ່ວມປຶກສາຫາລືກັບບັນດາພະແນກການ, ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ໃນການກະກຽມການດຳເນີນງານ ຂອງ ໂຄງການ ເພື່ອຄວາມເຂົ້າໃຈຕໍ່ ທິດທາງ ແຜນການ ຈຸດປະສົງເປົ້າໝາຍ ຂອງ ໂຄງການ ທັງນີ້ກໍເພື່ອສ້າງ ຄວາມສະດວກໃນການ ປະສານງານ ແລະ ການດຳເນີນໂຄງການ ກອງປະຊຸມຈະປະກອບມີ ຮອງເຈົ້າແຂວງ (ຜູ້ຊີ້ນຳວຽກງານສິ່ງແວດລ້ອມຂັ້ນແຂວງ), ຄະນະກຳມະການຊີ້ນຳຂັ້ນແຂວງ 8ທ່ານ, ຕາງໜ້າຈາກພະແນກການຕ່າງໆຂັ້ນແຂວງ 5ຄົນ, ຍິງ 1ຄົນ ແລະ ພະນັກງານໂຄງການຈາກແຂວງ 3 ທ່ານ. *ກິດຈະກຳ 1.8:* ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ ຮ່ວມປຶກສາຫາລືກັບບັນດາຫ້ອງການ, ໜ່ວຍງານທີ່ກ່ຽວຂ້ອງຂັ້ນເມືອງໃນການກະກຽມການດຳເນີນງານ ຂອງ ໂຄງການ ເພື່ອຄວາມເຂົ້າໃຈຕໍ່ ທິດທາງ ແຜນການ ຈຸດປະສົງເປົ້າໝາຍ ຂອງ ໂຄງການ ທັງນີ້ກໍເພື່ອສ້າງ ຄວາມສະດວກໃນການ ປະສານງານ ແລະ ການດຳເນີນໂຄງການ ກອງປະຊຸມຈະປະກອບມີ ຮອງເຈົ້າເມືອງ (ຜູ້ທີ່ເປັນຄະນະກຳມະການຊີ້ນຳຂັ້ນແຂວງ), ຄະນະກຳມະການຊີ້ນຳຂັ້ນເມືອງ 4ທ່ານ, ຕາງໜ້າຈາກພະແນກການຕ່າງໆຂັ້ນແຂວງ 10ຄົນ, ຍິງ 2ຄົນ ແລະ ພະນັກງານໂຄງການຈາກແຂວງ 3ທ່ານ.
ອົງປະກອບ 2. ສະໜັບສະໜູນຄຸ້ມຄອງປ່າປ້ອງກັນແຫ່ງຊາດ	*ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ* - ໂຄສະນາປຸກຈິດສຳນຶກໃນລະດັບພື້ນຖານ ໂດຍນຳໃຊ້ເຕັກນິກຕ່າງໆ, ເຜີຍແຜ່ລະບຽບກົດໝາຍ ແລະ ວິທີການທີ່ດີ ກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍຊຸມຊົນ ແລະປ່າປ້ອງກັນ, ນຳໃຊ້ເຄື່ອງມືປະຈັກຕາ

	ເຊັ່ນ ປົດສະເຕ, ລາຍການໂຄສະນາທາງວິທະຍຸ ກ່ຽວກັບກິດຈະກຳອະນຸລັກ, ກ່ອນ ແລະ ຫລັງການຈັດຕັ້ງປະຕິບັດ ຕ້ອງໄດ້ດຳເນີນການປະເມີນຄວາມ ຮັບຮູ້ກ່ຽວຂ້ອງ. *ກິດຈະກຳ 2.2.: ຄຸ້ມຄອງຈັດສັນທີ່ດິນ* - ລົງປຶກສາຮ່ວມປະຊາຊົນ ເພື່ອວາງແຜນການນຳໃຊ້ທີ່ດິນພ້ອມສ້າງແຜນທີ່ - ຮ່ວມກຳນົດເຂດການນຳໃຊ້ດິນແຕ່ລະປະເພດ ພາຍໃນບ້ານ. - ຮ່ວມສ້າງລະບຽບການຄຸ້ມຄອງນຳໃຊ້ທີ່ດິນຂັ້ນບ້ານ. - ຮ່ວມສ້າງຕັ້ງຄະນະກຳມະການຮັບຜິດຊອບຂັ້ນບ້ານ. - ຮ່ວມກຳນົດເຂດຄຸ້ມຄອງປ່າໄມ້ ແລະ ຟື້ນຟູປ່າໄມ້. - ຮ່ວມຈັດສັນເຂດຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ - ສ້າງ ແລະ ປັກປ້າຍຊີ້ບອກປະເພດເນື້ອທີ່ຕ່າງໆ ຂອງ ບ້ານ. - ຮ່ວມສ້າງສັນຍາຮ່ວມກັບຊຸມຊົນໃນການຄຸ້ມຄອງປ່າປ້ອງກັນແຫ່ງຊາດ - ກຸ່ມອະນຸລັກຂອງບ້ານເຄື່ອນໄຫວກວດກາລາດຕະເວນ *ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ* - ລົງຮ່ວມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ເພື່ອວາງແຜນປັບປຸງຊີວິດ ການເປັນຢູ່ຊຸມຊົນ (ລາຍລະອຽດຈະມີຂັ້ນຕອນດຳເນີນງານຕື່ມ). - ສະໜັບສະໜູນທຶນສ້າງເປັນກອງທຶນອະນຸລັກບ້ານ. *ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ* - ອອກແບບ, ກຳນົດຈຸດສ້າງຈຸດກວດກາຮ່ວມກັບເມືອງ ແລະ ບ້ານກ່ຽວຂ້ອງ - ປະມູນການກໍ່ສ້າງ - ຕິດຕາມການກໍ່ສ້າງ - ມອບ-ຮັບຈຸດກວດກາທີ່ກໍ່ສ້າງສຳເລັດ - ປະກອບພະນັກງານເຂົ້າປະຈຳ 4 ສະຫາຍ/ຈຸດກວດກາ - ອອກກວດກາລາດຕະເວນປົກກະຕິ
ອົງປະກອບ 3: ການຕິດຕາມບ້ານເປົ້າໝາຍ ໃນເຂດອ່າງໂຕ່ງນ້ຳຍ້ອງ	ເປັນກິດຈະກຳທີ່ມີຄວາມຈຳເປັນ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ເພື່ອເປັນການສືບຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ບ້ານເປົ້າໝາຍໂຄງການ ທີ່ໄດ້ຜ່ານການຈັດຕັ້ງປະຕິບັດ ຈຳນວນ 33 ບ້ານ (ບ້ານຂອງໂຄງການ ນ້ຳຍ້ອງຕອນເໜືອເກົ່າ 9 ບ້ານ, ບ້ານຂອງໂຄງການນ້ຳຍ້ອງຕອນໃຕ້ 12 ບ້ານ ແລະ ບ້ານຂອງໂຄງການເຄືອຂ່າຍອະນຸລັກຊຸມຊົນເກົ່າ 2 ບ້ານ) ເຊິ່ງກິດຈະກຳນີ້ແມ່ນຈະໄດ້ ຈັດຕັ້ງປະຕິບັດ

	ໂດຍການສົມທົບ ແລະ ປະສານງານກັນລະຫວ່າງ ຜູ້ຮັບຜິດຊອບໂຄງການ ແລະ ພະນັກງານເມືອງທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດ ວຽກງານອະນຸລັກ ແລະ ວຽກງານກອງທຶນບ້ານ ໂດຍຈະປະຕິບັດໃນ 2 ຄັ້ງ ຕໍ່ປີ
ອົງປະກອບ 4: *ຄຸ້ມຄອງບໍລິຫານໂຄງການ*	ການບໍລິຫານ ແລະການຄຸ້ມຄອງໂຄງການ ຈະຕ້ອງໄດ້ປະຕິບັດຕາມຄູ່ມືການຈັດຕັ້ງປະຕິບັດໂຄງການ ລວມທັງການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການກວດກາຕິດຕາມແລະການລາຍງານ ໂດຍໄດ້ຮັບການຝຶກອົບຮົມຈາກ ກປສ ແລະ ຮັບປະກັນກິດຈະກຳດັ່ງຕໍ່ໄປນີ້: 4.1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈຮ່ວມກັນໃນທີມງານ 4.2. ຈັດຊື້ອຸປະກອນ ໂຄງການ 4.3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ກ່ຽວກັບຄວາມຄືບໜ້າກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມທັງຕົວຊີ້ວັດ ແລະ ຜົນທີ່ໄດ້ຮັບ ແລະ ການເງິນ (ລວມທັງການຈັດຊື້) ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ. 4.4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ 4.5. ປະເມີນຜົນ (ອາດໃຊ້ຊ່ຽວຊານໃນການປະເມີນຜົນ) ດຳເນີນການປະເມີນ ຜົນສຳເລັດຂອງການຈັດຕັ້ງປະຕິບັດ ໂດຍ ກປສ ເອງ ໂດຍອີງໃສ່ບົດສະຫຼຸບໂຄງການ ລວມທັງຖອດຖອນບົດຮຽນເພື່ອຜັນຂະຫຍາຍ ໃນຕໍ່ໜ້າ. ໃນນີ້ ກປສ ຈະເຮັດບົດປິດໂຄງການ, ຊຶ່ງໃນນັ້ນ ຈະປະເມີນຜົນຂອງການຈັດຕັ້ງໂຄງການຍ່ອຍ ລວມທັງຈັດລະອຽດກ່ວາເກົ່າ, ແບບຟອມຈະໄດ້ສ້າງຂຶ້ນ.

14. ຜູ້ໄດ້ຮັບຜົນປະໂຫຍດທີ່ເປັນເປົ້າໝາຍ	❑ ພະນັກງານລັດ ຈຳນວນທັງໝົດ (4,476) ແມ່ຍິງ (910) *ລະດັບສູນກາງ* (-) ແມ່ຍິງ (-) *ລະດັບແຂວງ* (39) ແມ່ຍິງ (5) *ລະດັບເມືອງ* (20) ແມ່ຍິງ (3) ❑ *ບ້ານ* (9) ຈຳນວນຄົນ (4,417) ແມ່ຍິງ (902) ❑ ອື່ນໆ.ບອກຕື່ມ:( )
15. ມື້ເລີ້ມທີ່ສະເໜີມາ	01 / 1/ 2016

16. ມື້ປິດທີ່ສະເໜີມາ	01 / 1 / 2020 (ໄລຍະ 5 ປີ)
17. ຜູ້ຮ່ວມທຶນ *(ແຫ່ງແລະຈຳນວນ ເປັນໂດລາ)*	ໂຄງການທີ່ເປັນຄູ່ຂະໜານທີ່ເຮັດວຽກໃນລະດັບທ້ອງຖິ່ນ ມີສອງໂຄງການ ຄຸ້ມຄອງອ່າງໂຕ່ງນ້ຳຍ້ອງຕອນເໜືອແລະຕອນໃຕ້ ຂອງບໍລິສັດເຫີນ-ຫີນບຸນ ພາວເວີຈຳກັດ ທີ່ໃຫ້ທຶນສະໜັບສະໜຸນ ໃນການຄຸ້ມຄອງສິ່ງແວດລ້ອມແລະ ສັງຄົມ ຢູ່ໃນຂອບເຂດຂອງອ່າງໂຕ່ງນ້ຳຍ້ອງ, ສ່ວນໂຄງການຄຸ້ມຄອງອ່າງນ້ຳຍ້ອງ ຕອນເໜືອ ທີ່ໄດ້ທຶນສະໜັບສະໜຸນຈາກທຶນປະກອບສ່ວນຂອງບໍລິສັດເຫີນຫີນບຸນພາກຂະຫຍາຍ ໃຫ້ ກປສ ໃນຈຳນວນ 250,000 ໂດລາ (**ໂຄງການໄລຍະທີ1, 2013-205**) ຫາກສຳເລັດໄປ ແລະໄລຍະ2 ທີ່ກຳລັງຂໍ້ນີ້ເກືອບ 400,000 ໂດລາ ແລະ ຈະສືບຕໍ່ໄປເຖິງປີ 2040, ສ່ວນໂຄງການ ຄຸ້ມຄອງອ່າງນ້ຳຍ້ອງຕອນໃຕ້ ປະມານ 1,700,000 ໂດລາ(**ແຕ່ປີ 2013-2017**) ນອກນັ້ນ, ທຶນປະກອນສ່ວນຂອງລັດຖະບານ ສປປ ລາວ ໂດຍທີ່ບໍ່ ເປັນເງິນສົດ ໂດຍສະເພາະແມ່ນສະຖານທີ່, ອຸປະກອນແລະພະນັກງານ ວິຊາການຂອງລັດ
18. ໂຄງການ/ແຜນງານ ເສີມສິ່ງໄດ້ລິເລີ້ມ ຫຼືກຳ ລັງດຳເນີນ *(ຊື່, ແຫ່ງທຶນ, ສາຍພົວພັນ)*	1. ໂຄງການສຶກສາຄົ້ນຄວ້າຄ່າບໍລິການສິ່ງແວດລ້ອມ ຂອງຄະນະເສດຖະສາດແລະບໍລິຫານທຸລະກິດ ຂອງມະຫາທະຍາໄລແຫ່ງຊາດ (ມຊ), ຮ່ວມມືກັບ ພຊສ ແຂວງ, ຈັດຕັ້ງຢູ່ປ່າສະຫງວນແຂວງພູຈອມມອຍ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການຄິດໄລ່ຄ່າບໍລິການສິ່ງແວດລ້ອມ (ກຳລັງກະກຽມຢູ່); 2. ໂຄງການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າສະຫງວນແລະສັດປ່າ ຂອງແຂວງບໍລິຄຳໄຊ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການຄຸ້ມຄອງປ່າສະຫງວນ (ຍຸດທະສາດປ່າໄມ້ແຂວງ, ການຕິດຕາມກວດກາປ່າສະຫງວນ/ປ່າປ້ອງກັນຢູ່ແຂວງ) (ເລີ້ມຈັດຕັ້ງໃນປີ 2015); 3. ໂຄງການສ້າງຄວາມເຂັ້ມແຂງໃນການຝຶກອົບຮົມການຄຸ້ມຄອງປ່າສະຫງວນແລະສັດປ່າ ຂອງຄະນະວິທະຍາສາດປ່າໄມ້-ມຊ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການຝຶກອົບຮົມການຄຸ້ມຄອງປ່າສະຫງວນແລະສັດປ່າ (ເລີ້ມຈັດຕັ້ງໃນປີ 2015); 4. ໂຄງການສ້າງຄວາມສາມາດໃນການຄຸ້ມຄອງປ່າສະຫງວນແລະສັດປ່າ ຂອງກອງກວດກາປ່າໄມ້, ແຂວງບໍລິຄຳໄຊ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການຄຸ້ມຄອງສັດປ່າ (ເລີ້ມຈັດຕັ້ງໃນປີ 2015);

	5. ໂຄງການສ້າງຄວາມເຂັ້ມແຂງໃນການຝຶກອົບຮົມການຄຸ້ມຄອງປ່າສະຫງວນ ແລະສັດປ່າ ຂອງຄະນະວິທະຍາສາດປ່າໄມ້-ມຊ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການຝຶກອົບຮົມການຄຸ້ມຄອງປ່າສະຫງວນແລະສັດປ່າ (ເລີ້ມຈັດຕັ້ງໃນປີ 2015); 6. ໂຄງການສ້າງຄວາມເຂັ້ມແຂງໃນການຝຶກອົບຮົມວິທະຍາສາດທຳມະຊາດທີ່ຕິດພັນກັບການປົກປັກຮັກສາປ່າສະຫງວນ ຂອງຄະນະວິທະຍາສາດທຳມະຊາດ-ມຊ, ໄດ້ທຶນຈາກ ກປສ/ທະນາຄານໂລກ ກ່ຽວກັບການສຶກສາວິທະຍາສາດກ່ຽວກັບສັດປ່າແລະພືດ (ກຳລັງກະກຽມຢູ່);

19. ກົນໄກການຈັດຕັ້ງໂຄງການຍ່ອຍ

a) ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ.

b) ພະນັກງານແລະການຊ່ວຍເຫຼືອທາງວິຊາການທີ່ຕ້ອງການເພີ່ມເຕີມ ໃນດ້ານໃດ ເພື່ອເຮັດໃຫ້ໂຄງການຍ່ອຍທີ່ສະເໜີມາ ໄດ້ຮັບຜົນສຳເລັດ (ເປັນຕົ້ນພະນັກງານກວດກາຕິດຕາມ, ບັນຊີການເງິນ...).

a) ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ.

ໂຄງການນີ້ຈະຢູ່ພາຍໃຕ້ການນຳພາຂອງແຂວງ/ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ, ຊຶ່ງຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງ ຈະເປັນຜູ້ຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໂດຍແຕ່ງຕັ້ງຄະນະຮັບຜິດຊອບໂຄງການຍ່ອຍຂຶ້ນ (ພາລະບົດບາດແລະຕຳແໜ່ງສຳຄັນມີໃນເອກະສານຂັດຕິດ) ເພື່ອຕິດຕາມກິດຈະກຳຂອງໂຄງການ. ສ່ວນຜູ້ປະສານ ງານໃນການຈັດຕັ້ງປະຕິບັດຈະໄດ້ມີການແຕ່ງຕັ້ງ ຈາກທ່ານເຈົ້າເມືອງ ເພື່ອຊີ້ນຳ ແລະ ປະສານໃນການຈັດຕັ້ງປະຕິບັດ ກິດຈະກຳໃນພາກສະໜາມ

ຄະນະກຳການອະນຸລັກຊັບພະຍາກອນປ່າໄມ້ຂັ້ນບ້ານ ຈະໄດ້ຖືກສ້າງຂຶ້ນ ແລະ ຈະໄດ້ຮັບການສ້າງຄວາມສາມາດ ດ້ວຍການຝຶກອົບຮົມ ແລະການໄປທັດສະນະສຶກສາ ເພື່ອປະສານງານໃນການຄຸ້ມຄອງຕິດຕາມກວດກາປ່າປ້ອງກັນ ແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງ ແລະ ອັງສະຫງວນປ່າທຳມະຊາດ ຢູ່ໃນເຂດບ້ານຂອງເຂົາເຈົ້າ, ກປສ ຈະປະສານແລະ ຕິດຕາມ ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຍ່ອຍຢູ່ແຂວງ, ເມືອງແລະບ້ານ ໃນຖານະເປັນຜູ້ໃຫ້ທຶນ ເພື່ອ ຮັບປະກັນ ໃຫ້ ໂຄງການໄດ້ບັນລຸຕາມຈຸດປະສົງຂອງ ກປສ.

1). ໜ້າທີ່ແລະຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ:

- ຄະນະກຳມະການສິ່ງແວດລ້ອມຂັ້ນແຂວງ: ມີໜ້າທີ່ພິຈາລະນາແຜນການລວມ ແລະ ໃຫ້ທິດທາງ ແກ່ການຈັດຕັ້ງປະຕິບັດວຽກງານຂອງໂຄງການ.

- **ພຊສ ແຂວງ:** ຊີ້ນຳການຈັດຕັ້ງປະຕິບັດກິດຈະກຳ, ຮັບຜິດຊອບໃນການຈັດຊື້, ຈັດຈ້າງແລະຄຸ້ມຄອງ ການເງິນ ຂອງວຽກນີ້, ເຮັດບົດລາຍງານການການເຄື່ອນໄຫວວຽກງານໂຄງການເປັນປະຈຳລາຍງານໃຫ້ແຂວງ (ຄະນະ ກຳມະການ ສິ່ງແວດລ້ອມຂັ້ນແຂວງ ແລະ ກປສ).

- **ກປສ:** ອະນຸມັດບົດສະເໜີໂຄງການ, ສະໜອງຄູ່ມືແນະນຳການຈັດຕັ້ງປະຕິບັດໂຄງການ, ການຕິດຕາມແລະ ປະເມີນຜົນການຈັດຕັ້ງປະຕິບັດໂຄງການ ລວມທັງດ້ານເຕັກນິກ ແລະ ການເງິນ.

- **ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້ແຂວງ, ພຊສ ແຂວງ:** ຕາມພາລະບົດບາດຈະເປັນເຈົ້າການວາງແຜນ ແລະ ຈັດຕັ້ງປະຕິບັດແຜນກິດຈະກຳບຸລິມະສິດ ທັງຢູ່ລະດັບແຂວງ, ເມືອງ ແລະ ບ້ານ.

- **ຫຊສເມືອງ:** ຈະເປັນຜູ້ຈັດຕັ້ງປະຕິບັດກິດຈະກຳ ທັງໃນລະດັບເມືອງ ແລະຊີ້ນຳໃນລະດັບບ້ານເພື່ອຮັບປະກັນ ການປະສານງານ ແລະ ປະກອບສ່ວນຂອງທຸກຫ້ອງການທີ່ກ່ຽວຂ້ອງຂອງເມືອງໂດຍສະເພາະ ຫ້ອງການ ກະສິກຳ ແລະ ປ່າ ໄມ້ເມືອງ ໃນການຈັດຕັ້ງປະຕິບັດກິດຈະກຳ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງ ແລະ ລາຍງານຄວາມຄືບໜ້າໃຫ້ແກ່ ພຊສແຂວງ.

- **ຫ້ອງການ ກະສິກຳແລະປ່າໄມ້ເມືອງ:** ເຂົ້າຮ່ວມໃນວຽກງານສົ່ງເສີມດ້ານກະສິກຳໃຫ້ແກ່ບ້ານ ໂດຍສະເພາະ ແມ່ນ ເຕັກນິກວິຊາການ.

- **ຄະນະກຳມະການອະນຸລັກຊັບພະຍາກອນປ່າໄມ້ຂັ້ນບ້ານ:** ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານໂຄງການ ແລະຮັບປະກັນໃຫ້ຊາວບ້ານໄດ້ເຂົ້າຮ່ວມຫຼາຍທີ່ສຸດ, ນຳພາການຈັດຕັ້ງປະຕິບັດວຽກປະຈຳວັນ ແລະ ຮັບປະກັນ ໃຫ້ກິດຈະ ກຳໄດ້ຮັບຜົນສຳເລັດ ແລະ ລາຍງານບັນຫາໃຫ້ຜູ້ຊີ້ນຳຂອງເມືອງ ແລະ ພະນັກງານທີ່ກ່ຽວຂ້ອງແໜ່ ແກ້ໄຂບັນຫາໃຫ້ທັນ ການ (ໂຄງຮ່າງການຈັດຕັ້ງມີເອກະສານຂັດຕິດ).

2). ພະນັກງານ ແລະ ການຊ່ວຍເຫລືອທາງວິຊາການ.

ດ້ານບຸກຄະລາກອນ ທີ່ໃຊ້ໃນການຈັດຕັ້ງປະຕິບັດໂຄງການແມ່ນເອົາພະນັກງານ ຂອງ ແຂວງທີ່ມີປະສົບການ ເປັນຜູ້ນຳພາທາງດ້ານວິຊາການ ໃນການປະຕິບັດແຜນຂອງໂຄງການ ໂດຍຝຶກອົບຮົມແລະສ້າງຄວາມເຂັ້ມແຂງໃຫ້ ພະນັກງານຂອງເມືອງທີ່ກ່ຽວຂ້ອງຂັ້ນເມືອງ ທີ່ຈະເປັນຜູ້ຈັດຕັ້ງປະຕິບັດໂຄງການພາກສະໜາມແບບມີສ່ວນຮ່ວມ ກັບຊຸມ ຊົນ ໂດຍສົມທົບກັບອຳນາດການປົກຄອງຂັ້ນກຸ່ມບ້ານ ແລະ ບ້ານ.

20. ງົບປະມານສັງລວມ

ສະເໜີແຜນງົບປະມານ ແລະ ຂັດຕິດກັບບົດສະເໜີໂຄງການຍ່ອຍ (ເບິ່ງຮ່າງທີ່ໄດ້ຂັດຕິດມາພ້ອມນີ້). ໃນບົດສະເໜີນີ້ ຈະສະແດງ ໃຫ້ເຫັນພຽງ ແຕ່ ງົບປະມານສັງລວມຂອງໂຄງການຍ່ອຍ. ສັງເກດວ່າເມື່ອໂຄງການຍ່ອຍຈະໄດ້ຖືກຮັບຮອງໝົດໄລຍະໂຄງການຍ່ອຍທັງໝົດ ແຕ່ຫລັງຈາກປີທີ 1,

ທຶນຮອນຈະປ່ອຍໃຫ້ນີ້ ແມ່ນອີງໃສ່ຜົນງານໃນປີຜ່ານມາ ອີງໃສ່ຄາດໝາຍທີ່ກຳນົດໃນແຜນປີທີ່ໄດ້ຖືກຮັບຮອງເອົາ (ເບິ່ງຂໍ້ 24). ສຳລັບໂຄງການຍ່ອຍທີ່ໄດ້ຮັບຮອງແລ້ວ ຫ້ອງການ ກປສ ຈະເປັນຜູ້ເຮັດແຜນ ຈັດຊື້-ຈັດຈ້າງ ຕ່າງໆ

ອົງປະກອບ (ບໍ່ເກີນ 5 ອົງປະກອບລວມທັງການຄຸ້ມຄອງໂຄງການ)	ງົບປະມານ (ລ້ານກີບ)	ທຶນປະກອບສ່ວນທາງກົງ ຫລືຄູ່ຂະ ໜານຖ້າເປັນ ໄປໄດ້
ອົງປະກອບ 1: *ສ້າງຄວາມອາດສາມາດການຄຸ້ມຄອງປ່າປ້ອງກັນ*	658	
ອົງປະກອບ 2. ສະນັບສະໜຸນການຄຸ້ມຄອງປ່າປ້ອງກັນ ແລະ ການ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ	1,586	
ອົງປະກອບ 3: *ການຕິດຕາມຍ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ຳຍ້ອງ*	150	
ອົງປະກອບ 4: *ຄຸ້ມຄອງບໍລິຫານໂຄງການ*	269	
ຄ່າແຮສຸກເສີນ (5%)	133	
ລວມຍອດ :	*2,796*	

21. ຄວາມຍືນຍົງ

ອະທິບາຍວ່າຜົນໄດ້ຂອງໂຄງການຍ່ອຍຈະສືບຕໍ່ ຫຼື ຮັກສາໄວ້ ຫຼັງໂຄງການສິ້ນສຸດ.

ປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງ ຈະຕ້ອງໄດ້ຮັບການຄຸ້ມຄອງຕະຫຼອດໄປເມື່ອຈົບໂຄງການ ດ້ວຍການທີ່ ປະຊາຊົນໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມຕໍ່ການປົກປັກຮັກສາປ່າໄມ້, ສັດນ້ຳ-ສັດປ່າ ທີ່ສ້າງໃຫ້ຄວາມສົມດຸນໃນ ລະບົບຕ່ອງໂສ້ດ້ານການດຳລົງຊີວິດທີ່ອາໄສທຳມະຊາດ ທີ່ມີຄວາມຍືນຍົງ ແລະ ນັບມື້ນັບອຸດົມສົມບູນ ສະນັ້ນສິ່ງທີ່ມີ ຄວາມຈຳເປັນ ແລະ ຕ້ອງສືບຕໍ່ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ປົກກະຕິ ແມ່ນວຽກຕິດຕາມກວດກາລາດຕະເວນ ຂອງ ຈຸດກວດກາແຕ່ລະຈຸດ ສົມທົບຮ່ວມກັບ ທີມງານອະນຸລັກບ້ານແຕ່ລະບ້ານ, ເພື່ອສະກັດກັ້ນການບຸກລຸກທຳລາຍ ຈາກຜູ້ບໍ່ຫວັງດີ.

ພ້ອມນີ້ວຽກຄຸ້ມຄອງກອງທຶນບ້ານ ເຊິ່ງມີສັນຍາຄ້ຳປະກັນຈາກບ້ານ ຕໍ່ການຄຸ້ມຄອງກອງທຶນອາດແມ່ນ ມາຈາກ ເງື່ອນໄຂການຄິດໄລ່ມູນຄ່າ ຄວາມຮັບຜິດຊອບໃນການປົກປັກຮັກສາປ່າໄມ້, ສັດນ້ຳ-ສັດປ່າ, ມູນຄ່າການຫລຸດຜ່ອນ ຫລື ມີການນຳໃຊ້ເຄື່ອງປ່າຂອງດົງ ແບບຍືນຍົງ ຫລື ການຜະລິດກະສິກຳທີ່ຍືນຍົງ ທີ່ໄດ້ກຳນົດເປັນສິ່ງຢັ້ງຢືນຕໍ່ກັບຜູ້ໃຫ້ທຶນ ຊຶ່ງ ຈະມອບໃຫ້ເມືອງ ໃນການຕິດຕາມຢ່າງໃກ້ສິດ

22. ແຜນການປະຕິບັດນະໂຍບາຍປ້ອງກັນສິ່ງແວດລ້ອມແລະສັງຄົມ

ກວດກາເບິ່ງວ່າມີຄວາມຕ້ອງການກະກຽມ ແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມ ຫຼື ບໍ່ (ກອບແຜນຄຸ້ມຄອງສິ່ງແວດລ້ອມແລະສັງຄົມສາມາດ ຄົ້ນຫາໄດ້ ທີ່ເວບໄຊ ກປສ).

ໂຄງການນີ້ແໜໃສ່ເພື່ອສ້າງເອົາຊຸມຊົນທີ່ຢູ່ໃນ ແລະ ອ້ອມຂ້າງປ່າປ້ອງກັນໃຫ້ເຂົ້າມາມີບົດບາດໃນການຄຸ້ມຄອງ ປ່າ

ປ້ອງກັນແລະສັດປ່າ ບົນພື້ນຖານຂອງຄວາມສະມັກໃຈຂອງຊຸມຊົນ ເພື່ອຫຼຸດຜ່ອນຄວາມຂັດແຍ່ງລະຫວ່າງເຂດ ທຳມາຫາ ກິນ ຂອງຊຸມຊົນ ກັບເຂດອະນຸລັກ, ຫລຸດຜ່ອນຜົນກະທົບທາງສັງຄົມ ແລະ ການຊົດເຊີຍຊັບສິນ ຮັບຮູ້ ສິດໃນການຄຸ້ມ ຄອງທີ່ດິນຕາມຮີດຄອງປະເພນີ.

23. ການມີສ່ວນຮ່ວມຂອງຊຸມຊົນ ລວມທັງບັນຫາບົດບາດຍິງ-ຊາຍ ໃນລະດັບບ້ານ

ເບິ່ງຕາມເອກະສານແນະນຳ ກ່ຽວກັບຂັ້ນຕອນປະຕິບັດ ໃນແຜນການມີສ່ວນຮ່ວມຂອງຊຸມຊົນ ຊຶ່ງສາມາດຄົ້ນຫາໄດ້ ທີ່ເວບໄຊ ກປສ.

ຊຸມຊົນ ມີບົດບາດຫລັກໃນການກຳນົດປະເດັນ ແລະ ສະເໜີມາດຕະການໃນການຄຸ້ມຄອງ ແລະ ການບັນເທົາ ເຊັ່ນ: ການສູນເສຍຊັບພະຍາກອນທຳມະຊາດ, ສູນເສຍລາຍຮັບທີ່ເກີດຈາກການກຳນົດພື້ນທີ່ທັບຊ້ອນເນື້ອທີ່ທຳການຜະລິດ, ກອບ ການມີສ່ວນຮ່ວມຂອງຊຸມຊົນ ຈະຖອດຖອນບົດຮຽນຂອງບັນດາໂຄງການໃນໄລຍະຜ່ານມາ ແລະ ບັນດາອົງການຈັດຕັ້ງສາກົນ ໃນຫລັກການພື້ນຖານ ດັ່ງນີ້:

1) ທຸກໆ ຊຸມຊົນ ຈະຕ້ອງມີສ່ວນຮ່ວມຢ່າງຈິງໃຈແລະສ້າງສັນ ແລະ ຮັບຮູ້ກ່ຽວກັບການອະນຸລັກຊີວະນາໆພັນ, ວັດຖຸປະສົງກິດຈະກຳ, ຜົນປະໂຫຍດ ແລະ ການສູນເສຍຈາກໂຄງການຍ່ອຍ.
2) ຖ້າການສະນັບສະໜຸນຊຸມຊົນ ຖືກສ້າງຂຶ້ນໂດຍທີ່ບໍ່ໄດ້ຮັບການປຶກສາຫາລື ຊຸມຊົນດັ່ງກ່າວຈະບໍ່ມີສິດເຂົ້າຮ່ວມ ກິດຈະກຳໂຄງການ ເພື່ອຫລຸດຜ່ອນຄວາມສ່ຽງແມ່ນຈະໄດ້ໃຊ້ຮູບແບບການວາງແຜນນຳໃຊ້ທີ່ດິນແບບມີສ່ວນ ຮ່ວມ, ການດຳເນີນງານຂອງຊຸມຊົນ ແລະ ການສັນຍາການປົກປັກຮັກສາທີ່ຖືກສ້າງຂຶ້ນແບບມີສ່ວນຮ່ວມກັບຊຸມ ຊົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈະມີລາຍຮັບທີ່ຍືນຍົງ.
3) ທຸກໆຊຸມຊົນ ຈະໄດ້ມີການປຶກສາຫາລືຢ່າງຈະແຈ້ງເພື່ອສ້າງການສະນັບສະໜຸນແບບຍືນຍົງ.
4) ທຸກໆຊຸມຊົນ ຈະຕ້ອງຖືກແຈ້ງໃຫ້ຊາບໂດຍຜ່ານຂໍ້ມູນຂ່າວສານ, ການສື່ສານ, ການສຶກສາ ໃນຊ່ວງຮອບວຽນ ຂອງໂຄງການກ່ຽວກັບປະເດັນພາສາ, ຊົນເຜົ່າ, ການອ່ານອອກ, ເພດ ແລະ ລັກສະນະສັງຄົມ.
5) ທຸກໆຊຸມຊົນ ຈະມີໂອກາດໃນການເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ຮັບຜິດຊອບການ ຄຸ້ມຄອງປ່າປ້ອງກັນແຫລ່ງນ້ຳແບບຍືນຍົງ. ການມີສ່ວນຮ່ວມຂອງຊຸມຊົນຈະມີໃນຮູບແບບການວາງແຜນນຳໃຊ້ທີ່ ດິນ, ການດຳເນີນງານຊຸມຊົນແລະ ສັນຍາການອະນຸລັກ.

25. ບັນຫາບົດບາດຍິງ-ຊາຍ (ການເຊື່ອມສານ)

ອະທິບາຍກ່ຽວກັບໂຄງການຍ່ອຍ ທີ່ຍືນຍອມກັບນະໂຍບາຍຂອງລັດ ໃນການເອົາໃຈໃສ່ ຕໍ່ບັນຫາບົດບາດຍິງ-ຊາຍ ພາຍໃຕ້ໂຄງການ.

ໂຄງການຍ່ອຍຈະໃຫ້ຄວາມສຳຄັນແກ່ແມ່ຍິງ ໂດຍຜ່ານຂະບວນການປຶກສາຫາລື ໃນລະຫວ່າງການຈັດຕັ້ງປະຕິ ບັດ ໂຄງການ ແມ່ຍິງຈະໄດ້ເຂົ້າມາມີສ່ວນຮ່ວມໃນການປຶກສາຫາລື ແລະ ກຳນົດປະເດັນ, ໄດ້ຮັບການຝຶກອົບຮົມ ແລະ ປັບປຸງ ຊີວິດການເປັນຢູ່ໃນເຂດທີ່ໄດ້ຮັບຜົນກະທົບ, ໄດ້ຮັບໂອກາດເຂົ້າຮ່ວມກິດຈະກຳກອງປະຊຸມການວາງແຜນ, ແລະການຈັດຕັ້ງ ປະຕິບັດໂຄງການ ແລະ ເປັນສະມາຊິກ ຢ່າງໜ້ອຍ 20%.

25. ບັນຫາບົດບາດຍິງ-ຊາຍ (ການເຊື່ອມສານ)

ອະທິບາຍກ່ຽວກັບໂຄງການຍ່ອຍ ທີ່ຍືນຍອມກັບນະໂຍບາຍຂອງລັດ ໃນການເອົາໃຈໃສ່ ຕໍ່ບັນຫາບົດບາດຍິງ-ຊາຍ ພາຍໃຕ້ໂຄງການ.

ໂຄງການຍ່ອຍຈະໃຫ້ຄວາມສຳຄັນແກ່ແມ່ຍິງ ໂດຍຜ່ານຂະບວນການປຶກສາຫາລື ໃນລະຫວ່າງການຈັດຕັ້ງປະຕິ ບັດ ໂຄງການ ແມ່ຍິງຈະໄດ້ເຂົ້າມາມີສ່ວນຮ່ວມໃນການປຶກສາຫາລື ແລະ ກຳນົດປະເດັນ, ໄດ້ຮັບການຝຶກອົບຮົມ ແລະ ປັບປຸງ ຊີວິດການເປັນຢູ່ໃນເຂດທີ່ໄດ້ຮັບຜົນກະທົບ, ໄດ້ຮັບໂອກາດເຂົ້າຮ່ວມກິດຈະກຳກອງປະຊຸມການວາງແຜນ, ແລະການຈັດຕັ້ງ ປະຕິບັດໂຄງການ ແລະ ເປັນສະມາຊິກ ຢ່າງໜ້ອຍ 20%.

26. ເງື່ອນໄຂການປະຕິບັດຜົນງານປະຈຳປີທີ່ໄດ້ຕົກລົງກັນ

ລາຍການເປົ້າໝາຍທີ່ໄດ້ຕົກລົງວ່າຈະໄດ້ສຳເລັດ ເພື່ອເປັນເງື່ອນໄຂ ການອະນຸມັດງົບປະມານໃນປີຕໍ່ໄປ

ໄດ້ຕົກລົງໃນເງື່ອນໄຂທີ່ວ່າ:

- ປະຕິບັດຖືກຕ້ອງ ດ້ານຄວາມໂປ່ງໃສ ແລະ ຄວາມຕ້ອງການໃນການປ້ອງກັນຜົນກະທົບ (ຢ່າງໜ້ອຍໄດ້ໃນລະດັບ ປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ມາ).
- ປະຕິບັດຖືກຕ້ອງຕາມມາດຖານການລາຍງານ (ດ້ານຈຳນວນ, ຄຸນນະພາບ ແລະ ເວລາ) (ຢ່າງໜ້ອຍໄດ້ໃນລະດັບ ປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ມາ).
- ໃນປີທີ 1 ຢ່າງໜ້ອຍ 50 % ຂອງກິດຈະກຳແຜນປີ ໄດ້ສຳເລັດ. ໃນປີທີ 2 ແລະ ຕໍ່ໄປ ຢ່າງໜ້ອຍ 70 % ຂອງແຕ່ ລະກິດຈະກຳແຜນປີ ໄດ້ສຳເລັດ.
- ເປົ້າໝາຍຂອງຜົນຮັບໃນປີທີພວມປະຕິບັດຢູ່ນັ້ນ ໄດ້ມີການວັດແທກ, ປິເມີນຜົນ ແລະ ສະແດງໃຫ້ເຫັນຄວາມຄືບ ໜ້າທີ່ຈະສຳເລັດຕາມເປົ້າໝາຍ.
- ແຜນວຽກແລະງົບປະມານ ໃນປີໃໝ່ ໄດ້ກະກຽມ ໂດຍຜ່ານ ກປສ ແລະ ເຫັນດີຮັບຮອງໂດຍສະພາບໍລິຫານ ກປສ.

27. ບັນຊີກວດເອກກະສານຂັດຕິດ

ຈຶ່ງຮັບປະກັນວ່າ ໄດ້ຂັດຕິດເອກກະສານດັ່ງຕໍ່ໄປນີ້ ໂດຍອີງໃສ່ຮ່າງທີ່ສະໜອງໃຫ້:

☑ ກອບຜົນຮັບໂຄງການຍ່ອຍ (ທັງໝົດໄລຍະໂຄງການ)

☑ ແຜນງົບປະມານຂອງໂຄງການຍ່ອຍ (a). ແຍກຕາມອົງປະກອບ ແລະ b). ແຍກປະເພດ)

☑ ແຜນວຽກລະອຽດຂອງປີທີ 1 (ແຍກຕາມອົງປະກອບ)

☐ ແຜນຄຸ້ມຄອງສິ່ງແວດລ້ອມຂອງໂຄງການຍ່ອຍ, ຖ້າຫາກເຮັດໄດ້

ຮັບຮູ້ ແລະ ເຫັນດີ ໂດຍ:

ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ
ແຂວງບໍລິຄຳໄຊ

ລັງສີ ແກ້ວວິເສດ
Langsi KEOVISETH

ສະເໜີໂດຍ:

ຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້
ແຂວງບໍລິຄຳໄຊ

ມະນີແສງເພັດ ພະຄູນທອງ
Mr. Manysengphet PHAKHOUNTHONG